Lao - ປິ່ນປົວ ການອະທິຖານ ພຣະຄຳພີ - Healing Scriptures

ອົບພະຍົກ 15:26 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຖ້າພວກເຈົ້າເຊື່ອຟັງເຮົາຜູ້ເປັນພຣະຜູ້ເປັນເຈົ້າຂອງເຈົ້າ ຈົ່ງທຳໃນສິ່ງທີ່ເຮົາເຫັນວ່າຖືກຕ້ອງ ເອົາໃຈໃສ່ທຳຕາມພຣະບັນຍັດຂອງເຮົາ ແລະປະຕິບັດຕາມກົດບັນຍັດຂອງເຮົາທຸກຢ່າງ ເຮົາກໍຈະບໍ່ລົງໂທດພວກເຈົ້າດ້ວຍໂຣກໄພໄຂ້ເຈັບຕ່າງໆເຫມືອນຢ່າງທີ່ເຮົາໄດ້ນຳມາລົງໂທດຊາວເອຢິບນັ້ນ ເຮົານີ້ແຫລະເປັນຜູ້ປິ່ນປົວພວກເຈົ້າໃຫ້ດີ”

ພຣະບັນຍັດສອງ 7:15 ພຣະຜູ້ເປັນເຈົ້າຈະຊົງຄຸ້ມຄອງໃຫ້ພວກທ່ານພົ້ນຈາກຄວາມເຈັບໄຂ້ໄດ້ປ່ວຍທັງປວງ ຈະບໍ່ຊົງນຳໂຣກຮ້າຍແຮງໃດໆດັ່ງທ່ານໄດ້ເຫັນໃນເອຢິບນັ້ນມາຖືກພວກທ່ານ ແຕ່ຈະຊົງນຳມາຖືກສັດຕຣູທັງປວງຂອງພວກທ່ານ

ເພງສັນເສີນ 107:20 ພວກເຂົາດີຈາກພຍາດດ້ວຍພຣະວັຈນະຂອງພຣະອົງ ແລະພຣະອົງຊົງຊ່ວຍພວກເຂົາບໍ່ໃຫ້ຕາຍ

ເພງສັນເສີນ 146:8 ແລະໃຫ້ຄົນຕາບອດໄດ້ເຫັນຮຸ່ງ ພຣະອົງຊົງຍົກຍ່ອງທຸກຄົນທີ່ຖືກຫຍໍ້ຫຍັນ ແລະຊົງຮັກຄົນຊອບທັມ

ເອຊາຢາ 35:5 ຄົນຕາບອດຈະເຫັນຮຸ່ງ ຄົນຫູຫນວກຈະໄດ້ຍິນ

ເອຊາຢາ 53:5 ແຕ່ເຂົາຖືກບາດເຈັບຍ້ອນບາບຂອງພວກເຮົາທັງຫລາຍ ເຂົາຖືກຕີຍ້ອນພວກເຮົາທຳຊົ່ວ ການລົງໂທດທີ່ເຂົາໄດ້ຮັບນັ້ນທຳໃຫ້ພວກເຮົາເປັນອິສຣະສົມບູນ ທີ່ເຂົາຖືກຕີນັ້ນກໍເພື່ອໃຫ້ເຮົາຫາຍດີ

ເອຊາຢາ 58:8 ແລ້ວຄວາມສວ່າງຈະພຸ່ງອອກມາແກ່ເຈົ້າຢ່າງອະຣຸນ ແລະແຜຂອງເຈົ້າຈະເອີ້ນເນື້ອຂຶ້ນມາຢ່າງໄວໆ ຄວາມຊອບທັມຂອງເຈົ້າຈະເດີນນຳຫນ້າເຈົ້າ ແລະພຣະສງ່າຣາສີຂອງພຣະເຈົ້າຈະລະວັງຫລັງເຈົ້າ

ເຢເຣມີ 30:17 ເຮົາຈະເຮັດໃຫ້ເຈົ້າດີເປັນປົກກະຕິອີກ ຈະປິ່ນປົວບາດແຜໃຫ້ດີ ເຖິງແມ່ນສັດຕຣູຂອງເຈົ້າເວົ້າວ່າ ເມືອງຊີໂອນຖືກເຂົາປະຖິ້ມແລ້ວ ບໍ່ມີໃຜສົນໃຈອີກ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”

ເຢເຣມີ 33:6 ເຮົາຈະນຳການປິ່ນປົວແລະຮັກສາມາໃຫ້ ແລະເຮົາຈະຮັກສາເຂົາທັງຫລາຍ

ໃຫ້ຫາຍແລະປະກາດສັນຕິພາບແລະຄວາມຫມັ້ນຄົງຢ່າງອຸດົມ

ມາລາກີ 4:2 ອຳນາດແຫ່ງຄວາມຊອບທັມຂອງເຮົາຈະເປັ່ງຮັສມີຂຶ້ນມາເຫມືອນດວງຕາເວັນ ເພື່ອຮັກສາບຳບັດ ແລະຊ່ອຍພວກເຈົ້າໃຫ້ພົ້ນໄພອັນຕະຣາຍ ພວກເຈົ້າຈະເປັນອິສຣະ ແລະມີຄວາມສຸກເຫມືອນລູກງົວທີ່ອອກຈາກຄອກ

ມັດທາຍ 4:23,24 ພຣະເຍຊູໄດ້ສະເດັດໄປທົ່ວແຂວງຄາລິເລ ຊົງສັ່ງສອນໃນໂຮງທັມມະເທສນາຂອງເຂົາ ຊົງປະກາດຂ່າວປະເສີດເຣື່ອງຣາຊອານາຈັກນັ້ນ ແລະຊົງໂຜດພົລເມືອງທີ່ເຈັບໄຂ້ໄດ້ພຍາດທຸກຢ່າງໃຫ້ດີຫມົດ 24 ກິດຕິສັບຂອງພຣະອົງກໍຈ່າວໄປທົ່ວປະເທດຊີເຣັງ ເຂົາຈຶ່ງພາຄົນປ່ວຍໄຂ້ໄດ້ພຍາດຕ່າງໆ, ຄົນທີ່ທົນທຸກທໍຣະມານ, ຄົນທີ່ຜີເຂົ້າສິງ, ຄົນບ້າຫມູແລະຄົນເປັນເປັ້ຍມາຫາພຣະອົງ ພຣະອົງກໍຊົງໂຜດໃຫ້ເຂົາດີທຸກຄົນ

ມັດທາຍ 8:16,17 ແລະເມື່ອຄ່ຳມາ ເຂົາໄດ້ພາຄົນທີ່ມີຜີຮ້າຍສິງຢູ່ຫລາຍຄົນມາຫາພຣະອົງ ພຣະອົງກໍຊົງຂັບໄລ່ຜີຮ້າຍເຫລົ່ານັ້ນອອກດ້ວຍຄຳສັ່ງຂອງພຣະອົງ ແລະບັນດາຄົນເຈັບປ່ວຍທັງຫລາຍນັ້ນ ພຣະອົງກໍໄດ້ຊົງໂຜດໃຫ້ດີ 17 ທັງນີ້ເພື່ອຈະໃຫ້ສຳເຣັດຕາມທີ່ຊົງກ່າວໄວ້ໂດຍເອຊາຢາຜູ້ປະກາດພຣະທັມວ່າ, “ທ່ານໄດ້ແບກຄວາມເຈັບໄຂ້ຂອງພວກເຮົາ ແລະຫອບເອົາພຍາດຂອງເຮົາໄປ”

ມັດທາຍ 9:35 ພຣະເຍຊູໄດ້ສະເດັດໄປທົ່ວທຸກເມືອງທຸກບ້ານ ຊົງສັ່ງສອນໃນໂຮງທັມມະເທສນາຂອງເຂົາ ຊົງປະກາດຂ່າວປະເສີດເຣື່ອງພຣະຣາຊອານາຈັກນັ້ນ ແລະຊົງໂຜດຄົນມີພຍາດແລະຄວາມເຈັບໄຂ້ທຸກຢ່າງໃຫ້ດີຫມົດ

ມັດທາຍ 10:1 ເມື່ອພຣະອົງຊົງເອີ້ນສາວົກສິບສອງຄົນມາແລ້ວ ກໍຊົງປະທານໃຫ້ເຂົາມີຣິດອຳນາດເຫນືອຜີຖ່ອຍຮ້າຍ ເພື່ອຂັບໄລ່ມັນອອກໄດ້ ແລະເພື່ອໃຫ້ພຍາດທັງຄວາມເຈັບໄຂ້ທຸກຢ່າງດີໄດ້ (ມາຣະໂກ 3:14,15)

ມັດທາຍ 10:8 ຄົນເຈັບໄຂ້ຈົ່ງເຮັດໃຫ້ດີ, ຄົນຕາຍແລ້ວຈົ່ງໃຫ້ເປັນຄືນມາ, ຄົນຂີ້ທູດຈົ່ງໃຫ້ດີສະອາດ, ແລະຈົ່ງຂັບໄລ່ຜີຮ້າຍອອກເສັ່ງ ທ່ານທັງຫລາຍໄດ້ຮັບລ້ຳໆ ຈົ່ງເຮັດໃຫ້ລ້ຳໆ

ມັດທາຍ 11:5 ຄືຄົນຕາບອດກໍເຫັນຮຸ່ງ, ຄົນຂາເສັ້ງກໍຍ່າງເປັນປົກກະຕິ, ຄົນຂີ້ທູດກໍດີສະອາດ, ຄົນຫູຫນວກກໍໄດ້ຍິນ, ຄົນຕາຍແລ້ວກໍເປັນຄືນມາ ແລະຂ່າວປະເສີດກໍປະກາດແກ່ຄົນອະນາຖາ

ມັດທາຍ 12:15 ແຕ່ພຣະເຍຊູຊົງຊາບ ຈຶ່ງສະເດັດອອກໄປຈາກທີ່ນັ້ນ ແລະປະຊາຊົນຫລວງ ຫລາຍກໍຕິດຕາມພຣະອົງໄປ ພຣະອົງກໍຊົງໂຜດໃຫ້ເຂົາດີພຍາດທຸກຄົນ

ມັດທາຍ 15:30 ແລະມີປະຊາຊົນຈຳນວນຫລາຍມາຫາພຣະອົງ ເຂົາພາຄົນຂາເສັ້ງ, ຄົນ ແຂນຂາພິການ, ຄົນຕາບອດ, ຄົນປາກກືກ, ແລະຄົນເຈັບອື່ນໆ ຫລາຍຄົນມາວາງໄວ້ ແທບພຣະບາດຂອງ ພຣະເຍຊູ ແລ້ວ ພຣະອົງໄດ້ຊົງໂຜດໃຫ້ເຂົາດີ

ມັດທາຍ 17:20 ພຣະເຍຊູຊົງຕອບເຂົາວ່າ, “ເພາະເຫດພວກທ່ານມີຄວາມເຊື່ອນ້ອຍ ດ້ວຍ ເຮົາບອກພວກທ່ານຕາມຄວາມຈິງວ່າ ຖ້າພວກທ່ານມີຄວາມເຊື່ອທໍ່ເມັດຜັກກາດເມັດ ນຶ່ງ ພວກທ່ານຈະສັ່ງພູຫນ່ວຍນີ້ວ່າ “ຈົ່ງເຄື່ອນຈາກບ່ອນນີ້ໄປຢູ່ບ່ອນນັ້ນ” ມັນກໍຈະ ເຄື່ອນໄປ ບໍ່ມີສິ່ງໃດທີ່ທ່ານເຮັດບໍ່ໄດ້

ມາຣະໂກ 1:34 ພຣະອົງຈຶ່ງຊົງໂຜດຄົນທີ່ເຈັບປ່ວຍດ້ວຍພຍາດຕ່າງໆ ໃຫ້ດີຫລາຍຄົນ ແລະ ຊົງຂັບໄລ່ຜີຮ້າຍຫລາຍໂຕອອກເສັ້ງ ສ່ວນຜີຮ້າຍເຫລົ່ານັ້ນພຣະອົງບໍ່ຊົງອະນຸຍາດໃຫ້ ປາກເພາະວ່າມັນຮູ້ຈັກພຣະອົງ

ມາຣະໂກ 3:10 ເພາະວ່າພຣະອົງໄດ້ຊົງໂຜດຫລາຍຄົນໃຫ້ດີພຍາດ ຈົນບັນດາຜູ້ມີພຍາດ ຕ່າງໆໄດ້ບຽດກັນເຂົ້າຫາພຣະອົງເພື່ອຈະຈັບບາຍພຣະອົງ

ມາຣະໂກ 6:5,6 ພຣະອົງຈະກະທຳການອິດທິຣິດທີ່ນັ້ນບໍ່ໄດ້ ເວັ້ນແຕ່ໄດ້ຊົງວາງພຣະຫັດເທິງ ຄົນເຈັບປ່ວຍບາງຄົນໃຫ້ດີພຍາດ 6 ພຣະອົງກໍປລາດພຣະທັຍເພາະເຂົາບໍ່ມີຄວາມເຊື່ອ ແລ້ວພຣະອົງໄດ້ສະເດັດໄປສັ່ງສອນທົ່ວທຸກບ້ານຮອບເຂດນັ້ນ

ມາຣະໂກ 6:13 ເຂົາໄດ້ຂັບໄລ່ຜີຮ້າຍອອກເສັ້ງຫລາຍໂຕ ແລະເອົານ້ຳມັນທາຄົນເຈັບປ່ວຍ ຫລາຍຄົນໃຫ້ດີພຍາດ

ມາຣະໂກ 6:55,56 ແລະເຂົາຮີບໄປທົ່ວຂົງເຂດນັ້ນ ຕັ້ງຕົ້ນເອົາຄົນເຈັບປ່ວຍໃສ່ບ່ອນນອນ ຫາມມາຍັງບ່ອນທີ່ເຂົາໄດ້ຍິນຂ່າວວ່າພຣະອົງປະທັບຢູ່ 56 ເມື່ອພຣະອົງສະເດັດໄປທີ່ໃດ ໃນເມືອງຫລື ບ້ານນອກບ້ານນາກໍດີ ເຂົາກໍເອົາຄົນເຈັບປ່ວຍມາວາງໄວ້ຕາມແຄມທາງ ບ່ອນຊຸມຊົນ ແລ້ວທູນຂໍພຣະອົງຊົງໂຜດໃຫ້ຄົນເຈັບປ່ວຍໄດ້ບາຍແຕ່ແຄມເຄື່ອງທົ່ງ ຂອງພຣະອົງແລະຜູ້ໃດໄດ້ບາຍແລ້ວກໍຖືກຊົງໂຜດໃຫ້ດີພຍາດທຸກຄົນ

ມາຣະໂກ 8:23-25 ພຣະອົງໄດ້ຊົງກຳມືຄົນຕາບອດຈູງເຂົາອອກໄປນອກເມືອງ ເມື່ອຊົງຖົ່ມ

ນ້ຳລາຍໃສ່ຄົນນັ້ນແລະຍຽດພຣະຫັດໃສ່ເຂົາແລ້ວຊົງຖາມວ່າ, “ເຈົ້າເຫັນຫຍັງແດ່ບໍ່” 24 ຄົນນັ້ນເງີຍຫນ້າເບິ່ງແລ້ວທູນຕອບວ່າ, “ຂ້ານ້ອຍເຫັນຄົນຍ່າງໄປມາ ແຕ່ເບິ່ງເຫມືອນຕົ້ນໄມ້”

ມາຣະໂກ 9:29 ພຣະອົງຊົງຕອບເຂົາວ່າ, “ຜີແນວນີ້ຈະຂັບໄລ່ອອກດ້ວຍວິທີອື່ນບໍ່ໄດ້ ເວັ້ນແຕ່ດ້ວຍການອ້ອນວອນ”

ມາຣະໂກ 16:17,18 ຫມາຍສຳຄັນເຫລົ່ານີ້ຈະເກີດມີແກ່ຄົນທີ່ເຊື່ອຄື ເຂົາຈະຂັບໄລ່ຜີອອກໄດ້ດ້ວຍນາມຂອງເຮົາ ເຂົາຈະເວົ້າພາສາແປກໆໄດ້ 18 ເຂົາຈະຈັບງູໄດ້ ຖ້າເຂົາດື່ມຂອງມີພິດຢ່າງໃດຈະບໍ່ເປັນອັນຕະຣາຍແກ່ເຂົາ ເມື່ອເຂົາວາງມືໃສ່ຄົນເຈັບປ່ວຍແລ້ວຄົນນັ້ນຈະດີເປັນປົກກະຕິ

ລູກາ 4:18 “ພຣະວິນຍານແຫ່ງອົງພຣະຜູ້ເປັນເຈົ້າຊົງສະຖິດຢູ່ເທິງຂ້າພະເຈົ້າ ເພາະວ່າພຣະອົງໄດ້ຫົດສົງຕັ້ງຂ້າພະເຈົ້າໄວ້ ໃຫ້ປະກາດຂ່າວປະເສີດແກ່ຄົນຍາກຈົນ ພຣະອົງໄດ້ຊົງໃຊ້ຂ້າພະເຈົ້າປະກາດອິສຣະພາບແກ່ບັນດາຊະເລີຍ ໃຫ້ປະກາດແກ່ຄົນຕາບອດວ່າຈະໄດ້ເຫັນຮຸ່ງອີກ ໃຫ້ປ່ອຍຜູ້ຖືກບີບບັງຄັບເປັນອິສຣະ

ລູກາ 4:40 ເມື່ອເວລາຕາເວັນຕົກ ຜູ້ໃດມີຄົນເຈັບເປັນພຍາດຕ່າງໆກໍພາມາຫາພຣະອົງ ພຣະອົງກໍຊົງວາງພຣະຫັດໃສ່ເຂົາທຸກຄົນ ໂຜດໃຫ້ເຂົາດີ

ລູກາ 5:15 ແຕ່ກິຕິສັບຂອງພຣະອົງແຮ່ງຊ່າລືໄປອີກ ແລະປະຊາຊົນຈຳນວນຫລາຍໄດ້ຊຸມນຸມກັນເພື່ອຟັງພຣະອົງ ແລະເພື່ອຊົງເຮັດໃຫ້ພຍາດຕ່າງໆຂອງເຂົາດີ

ລູກາ 5:17-25 ຢູ່ມາວັນນຶ່ງເມື່ອພຣະອົງຊົງສັ່ງສອນຢູ່ ມີພວກຟາຣີຊາຍແລະພວກຄຣູບາອາຈານນັ່ງຢູ່ຫັ້ນດ້ວຍ ຄົນເຫລົ່ານີ້ໄດ້ມາຈາກທຸກໆບ້ານໃນແຂວງຄາລີເລ ແຂວງຢູດາຍ ແລະຈາກກຸງເຢຣູຊາເລັມ ແລະຣິດເດດຂອງອົງພຣະຜູ້ເປັນເຈົ້າກໍສະຖິດຢູ່ກັບພຣະອົງ ເພື່ອພຣະອົງຈະຊົງເຮັດໃຫ້ເຂົາດີພຍາດ 18 ແລະເບິ່ງແມ່ນ, ມີຜູ້ຫາມຄົນເປັ້ຍຜູ້ນຶ່ງນອນເທິງບ່ອນນອນ ແລະເຂົາພຍາຍາມຈະຫາມຄົນເປັ້ຍນັ້ນເຂົ້າມາວາງຕໍ່ພຣະພັກຂອງພຣະອົງ 19 ເມື່ອເຂົາຫາທາງເຂົ້າບໍ່ໄດ້ເພາະມີຄົນຫລາຍເຂົາຈຶ່ງຂຶ້ນຫລັງຄາເຮືອນ ແລະຍ່ອນຄົນເປັ້ຍກັບທັງບ່ອນນອນລົງມາຕາມປ່ອງດິນຂໍ່ຫວ່າງກາງຫມູ່ຄົນຕໍ່ພຣະພັກພຣະເຍຊູ 20 ເມື່ອພຣະອົງຊົງເຫັນຄວາມເຊື່ອຂອງເຂົາແລ້ວກໍຊົງກ່າວກັບຄົນເປັ້ຍນັ້ນວ່າ, “ຊາຍ

ເອີຍ, ຄວາມຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ” 21 ຝ່າຍພວກນັກທັມແລະພວກຟາ
ຣີຊາຍກໍຕັ້ງຕົ້ນຄິດໃນໃຈວ່າ, “ຜູ້ນີ້ທີ່ເວົ້າຫມິ່ນປມາດພຣະເຈົ້າ ແມ່ນໃຜ ໃຜຈະຍົກ
ຄວາມຜິດບາບໄດ້ເວັ້ນແຕ່ພຣະເຈົ້າເທົ່ານັ້ນ” 22 ແຕ່ເມື່ອພຣະເຢຊູຊົງຊາບຄວາມ
ຄິດຂອງເຂົາ ພຣະອົງຈຶ່ງຊົງກ່າວວ່າ, “ເຫດສັນໃດທ່ານທັງຫລາຍຈຶ່ງຄິດພິຈາຣະນາໃນໃຈ
23 ທີ່ຈະວ່າ “ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ” ຫລືຈະວ່າ “ຈົ່ງລຸກຂຶ້ນແລະຍ່າງທຽວ
ໄປ” ອັນໃດຈະງ່າຍກວ່າກັນ 24 ແຕ່ເພື່ອທ່ານທັງຫລາຍຈະໄດ້ຮູ້ວ່າ ບຸດມະນຸດມີສິດອຳ
ນາດໃນໂລກໃຫ້ອະພັຍຄວາມຜິດບາບໄດ້” (ພຣະອົງຊົງກ່າວແກ່ຄົນເປັ້ຽວ່າ) “ເຮົາສັ່ງເຈົ້າ
ວ່າ ຈົ່ງລຸກຂຶ້ນຍົກເອົາບ່ອນນອນຂອງເຈົ້າໄປບ້ານເສັ້ຽ” 25 ໃນທັນໃດນັ້ນຄົນເປັ້ຽໄດ້ລຸກ
ຂຶ້ນຕໍ່ຫນ້າຄົນທັງປວງ ຍົກເອົາບ່ອນນອນຊຶ່ງຕົນໄດ້ນອນນັ້ນກັບໄປບ້ານ ໂດຍຮ້ອງ
ສັຣເສີນພຣະເຈົ້າ

ລູກາ 6:17-19 ແລ້ວພຣະອົງໄດ້ສະເດັດພ້ອມກັບພວກສາວົກ ລົງມາຢືນຢູ່ທີ່ຣາບພຽງບ່ອນ
ນຶ່ງ ບ່ອນນັ້ນມີສິດຂອງພຣະອົງຫລາຍຄົນກັບປະຊາຊົນຈຳນວນຫລວງຫລາຍ ທີ່ມາຈາກ
ທົ່ວແຂວງຢູດາຍ ຈາກກຸງເຢຣູຊາເລັມ ແລະຈາກຝັ່ງທະເລເຂດເມືອງຕີເຣກັບເມືອງຊີ
ໂດນ ເຂົາໄດ້ມາເພື່ອຟັງພຣະອົງ ແລະເພື່ອໃຫ້ດີພຍາດຕ່າງໆຂອງເຂົາ 18 ແລະບັນດາ
ຄົນທີ່ມີຜີຖ່ອຍຮ້າຍກຸກກວນກໍຊົງໂຜດໃຫ້ດີເຫມືອນກັນ 19 ປະຊາຊົນໄດ້ພຍາຍາມຈະ
ຖືກຕ້ອງພຣະອົງ ເຫດວ່າມີຣິດກຳລັງອອກມາຈາກພຣະອົງ ເຮັດໃຫ້ເຂົາດີພຍາດທຸກຄົນ

ລູກາ 7:21,22 ໃນເວລານັ້ນພຣະອົງໄດ້ຊົງໂຜດໃຫ້ຫລາຍຄົນດີພຍາດໂຣຄາຕ່າງໆແລະໃຫ້
ພົ້ນຈາກຜີຮ້າຍ ແລະໄດ້ຊົງໂຜດໃຫ້ຄົນຕາບອດຫລາຍຄົນໃຫ້ເຫັນຮຸ່ງ 22 ແລ້ວພຣະ
ອົງຊົງຕອບສິດທັງສອງນັ້ນວ່າ, “ຈົ່ງໄປແຈ້ງແກ່ໂຍຮັນ ຕາມທີ່ທ່ານໄດ້ເຫັນແລະໄດ້ຍິນ ຄື
ວ່າຄົນຕາບອດກໍເຫັນຮຸ່ງ ຄົນຂາເສັ້ງກໍຍ່າງເປັນປົກກະຕິ ຄົນຂີ້ທູດກໍດີສະອາດ ຄົນຫູ
ຫນວກກໍໄດ້ຍິນ ຄົນຕາຍແລ້ວກໍເປັນຄືນມາ ແລະຂ່າວປະເສີດກໍປະກາດແກ່ຄົນອະນາ
ຖາ

ລູກາ 8:2 ພ້ອມກັບແມ່ຍິງບາງຄົນທີ່ພົ້ນຈາກຜີຮ້າຍແລ້ວ ແລະພົ້ນຈາກພຍາດຕ່າງໆ ຄືມາ
ຣີອາຜູ້ມີຊື່ອີກວ່າມັກດາລາ ຜູ້ທີ່ພຣະອົງຊົງຂັບໄລ່ຜີເຈັດໂຕອອກ

ລູກາ 9:2 ແລ້ວພຣະອົງຊົງໃຊ້ເຂົາໃຫ້ອອກໄປປະກາດຣາຊອານາຈັກຂອງພຣະເຈົ້າ ແລະເຮັດ

ໃຫ້ຄົນເຈັບປ່ວຍດີພຍາດ

ລູກາ 9:11 ແຕ່ເມື່ອປະຊາຊົນຮູ້ຈັກ ເຂົາກໍຕາມໄປຫາພຣະອົງ ສ່ວນພຣະອົງກໍຊົງຕ້ອນຮັບ ເຂົາ ແລະຊົງບອກເຂົາເຖິງຣາຊແຜ່ນດິນຂອງພຣະເຈົ້າ ແລະທຸກຄົນທີ່ຕ້ອງການຢາກດີ ພຍາດພຣະອົງກໍຊົງໂຜດໃຫ້ດີ

ລູກາ 13:12 ເມື່ອພຣະເຢຊູຊົງເຫັນຈຶ່ງເອີ້ນນາງມາຊົງບອກວ່າ, “ນາງເອີຍ, ນາງໄດ້ພົ້ນຈາກ ພຍາດແລ້ວ”

ລູກາ 13:32 ພຣະອົງຊົງຕອບເຂົາວ່າ, “ຈົ່ງໄປບອກຫມາຈິກຈອກໂຕນັ້ນວ່າ “ເບິ່ງແມ່, ມື້ນີ້ ກັບມື້ອື່ນເຮົາກໍາລັງຂັບໄລ່ຜີອອກແລະເຮັດໃຫ້ດີພຍາດ ແລ້ວວັນທີ່ສາມເຮົາຈະເຖິງທີ່ສໍາ ເຣັດ

ໂຍຮັນ 5:8,14 ພຣະເຢຊູຊົງບອກຄົນນັ້ນວ່າ, “ຈົ່ງລຸກຂຶ້ນຍົກເອົາບ່ອນນອນຂອງເຈົ້າຍ່າງໄປ” 14 ພາຍຫລັງນັ້ນພຣະເຢຊູໄດ້ຊົງພົບຄົນນັ້ນໃນບໍຣິເວນພຣະວິຫານ ແລ້ວຊົງບອກວ່າ, “ນີ້ແຫລະ, ເຈົ້າດີພຍາດແລ້ວ ຢ່າເຮັດບາບຕໍ່ໄປ ຢ້ານວ່າເຫດຮ້າຍກວ່ານັ້ນຈະເກີດກັບ ເຈົ້າອີກ”

ໂຍຮັນ 14:12 “ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຜູ້ທີ່ເຊື່ອໃນເຮົາກໍຈະເຮັດກິຈ ການທີ່ເຮົາເຮັດຢູ່ນັ້ນເຫມືອນກັນ ແລະຜູ້ນັ້ນຈະເຮັດການໃຫຍ່ກວ່ານັ້ນອີກ ເພາະວ່າ ຝ່າຍເຮົາໄປເຖິງພຣະບິດາ

ກິຈການ 3:6 ແຕ່ເປໂຕໄດ້ກ່າວວ່າ, “ເງິນແລະຄໍາເຮົາບໍ່ມີ ແຕ່ອັນທີ່ເຮົາມີຢູ່ນັ້ນເຮົາຈະໃຫ້ ແກ່ເຈົ້າ ຄືໃນພຣະນາມແຫ່ງພຣະເຢຊູໄທນາຊາເຮັດຈົ່ງຍ່າງໄປ”

ກິຈການ 5:15,16 ຈົນວ່າເຂົາໄດ້ເອົາຄົນເຈັບປ່ວຍໃສ່ບ່ອນນອນນ້ອຍໃຫຍ່ ຫາມອອກໄປ ວາງໄວ້ຕາມຫົນທາງ ເພື່ອວ່າເມື່ອເປໂຕຍ່າງຜ່ານໄປນັ້ນ ຢ່າງຫນ້ອຍເງົາຂອງທ່ານຈະໄດ້ ຖືກບາງຄົນ 16 ແລະມີຄົນຈໍານວນຫລາຍໄດ້ອອກມາຈາກເມືອງຕ່າງໆ ທີ່ຢູ່ລ້ອມຮອບ ກຸງເຢຣູຊາເລັມນໍາຄົນເຈັບປ່ວຍມາ ແລະຄົນທີ່ຖືກຜີຖ່ອຍຮ້ອຍບຽດບຽນ ແລະທຸກຄົນກໍ ດີເປັນປົກກະຕິ

ກິຈການ 10:38 ຄືເຣື່ອງທີ່ພຣະເຈົ້າໄດ້ຊົງຫົດສົງເຢຊູໄທນາຊາເຮັດດ້ວຍພຣະວິນຍານບໍຣິ ສຸດແລະດ້ວຍຣິດທານຸພາບ ພຣະອົງຈຶ່ງສະເດັດໄປທຸກຫົນທຸກແຫ່ງເຮັດຄຸນງາມຄວາມດີ

ແລະຊົງໂຜດບັນດາຜູ້ຖືກມານບຽດບຽນໃຫ້ດີ ເພາະວ່າພຣະເຈົ້າຊົງສະຖິດຢູ່ກັບພຣະອົງ

ກິຈການ 19:11,12 ພຣະເຈົ້າໄດ້ຊົງບັນດານໃຫ້ໂປໂລເຮັດການອິດທິຣິດອັນແປກປລາດ 12 ຈົນເຂົາໄດ້ນຳເອົາຜ້າເຊັດເຫື່ອກັບຜ້າກັ້ນເປື້ອນຈາກຕົວຂອງໂປໂລໄປວາງໃສ່ຄົນປ່ວຍ ໄຂ້ພຍາດຕ່າງໆກໍຫາຍແລະຜີຮ້າຍກໍອອກໄປ

ໂຣມ 8:26 ໃນທຳນອງດຽວກັນນັ້ນແຫລະ, ພຣະວິນຍານຊົງຊ່ວຍຊູເຮົາທັງຫລາຍເມື່ອພວກເຮົາອ່ອນກຳລັງລົງ ເພາະເຮົາທັງຫລາຍບໍ່ຮູ້ວ່າພວກເຮົາຄວນຈະອ້ອນວອນຂໍສິ່ງໃດ ແຕ່ອົງພຣະວິນຍານຊົງຊ່ວຍຂໍແທນພວກເຮົາ ດ້ວຍການຖອດຫຸ່ນຢ່າງຫາຄຳເວົ້າບໍ່ໄດ້

1 ໂກຣິນໂທ 12:9 ແລະໃຫ້ອີກຜູ້ນຶ່ງມີຄວາມເຊື່ອ ແຕ່ເປັນພຣະວິນຍານອົງດຽວກັນ ແລະໃຫ້ອີກຜູ້ນຶ່ງມີອຳນາດໃຫ້ຄົນດີພຍາດ ແຕ່ເປັນພຣະວິນຍານອົງດຽວກັນ

1 ໂກຣິນໂທ 12:28 ແລະພຣະເຈົ້າໄດ້ຊົງຕັ້ງບາງຄົນໄວ້ໃນຄຣິສຕະຈັກ ຄືນຶ່ງ ອັຄສາວົກ ສອງ ຜູ້ປະກາດພຣະທັມ ສາມ ຄຣູບາອາจານ ແລ້ວຕໍ່ຈາກນັ້ນກໍມີຜູ້ເຮັດການອິດທິຣິດຕ່າງໆ ຜູ້ມີອຳນາດໃຫ້ດີພຍາດ ຜູ້ອຸປຖັມ ຜູ້ປົກຄອງ ແລະຜູ້ປາກພາສາແປກໆ

ຟີລິປອຍ 2:27 ຄວາມຈິງ ທ່ານກໍບໍ່ສະບາຍແລະເກືອບຕາຍໄປແທ້ ແຕ່ພຣະເຈົ້າຊົງພຣະກະຣຸນາໂຜດເອົາທ່ານໄວ້ ແລະບໍ່ແມ່ນຊົງໂຜດແຕ່ເທິ່ນຄົນດຽວ ແຕ່ຊົງໂຜດເຮົາດ້ວຍ ເພື່ອບໍ່ໃຫ້ເຮົາມີຄວາມທຸກຈ້ອນທຸກ

ຢາໂກໂບ 5:14 ມີຜູ້ໃດເຈັບໄຂ້ໄດ້ປ່ວຍຫລື ຈົ່ງໃຫ້ຜູ້ນັ້ນເຊີນບັນດາເຖົ້າແກ່ໃນຄຣິສຕະຈັກມາອ້ອນວອນສຳລັບຕົນ ແລະເອົານ້ຳມັນທາຜູ້ນັ້ນໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ

1 ເປໂຕ 2:24 ໃນພຣະກາຍຂອງພຣະອົງເອງ ພຣະອົງໄດ້ຊົງຮັບແບກບາບຂອງພວກເຮົາໄປ ເຖິງຕົ້ນໄມ້ນັ້ນ ເພື່ອພວກເຮົາຈະໄດ້ຕາຍເສັງ ຝ່າຍການບາບ ແລະມີຊີວິດຝ່າຍຄວາມຊອບທັມ ດ້ວຍບາດແຜຂອງພຣະອົງ ທ່ານທັງຫລາຍກໍດີປົກກະຕິແລ້ວ

3 ໂຢຮັນ 1:2 ທ່ານທີ່ຮັກເອີຍ, ຂ້າພະເຈົ້າອ້ອນວອນຂໍໃຫ້ທ່ານຈະເຣີນດີຂຶ້ນໃນທຸກສິ່ງ ແລະມີສຸຂພາບແຂງແຮງເຫມືອນຢ່າງຈິດວິນຍານຂອງທ່ານຈະເຣີນດີຢູ່ນັ້ນ

Pastor T. John Franklin
Church of Salvation, Healing, and Deliverance
COS-HAD.org